Lao

**ພະແນກສຶກສາທິການ ລັດຮາວາຍ**

**ອາຈານສອນທີ່ມີຄຸນວຸດທິຕາມ ESSA ຂອງ ລັດຮາວາຍ**

**ຕົວຢ່າງແຈ້ງການ ວ່າ ດ້ວຍສິດຂອງພໍ່ແມ່ເພື່ອຂໍ ຄຸນວຸດທິ ຂອງອາຈານສອນ**

**ສົກຮຽນ 2025-2026**

ຮຽນທ່ານພໍ່ແມ່ ແລະ ຜູ້ປົກຄອງທີ່ຮັກແພງ:

ຂໍ້ກຳນົດວ່າດ້ວຍຄວາມສຳເລັດຂອງນັກຮຽນທຸກໆຄົນ (The Every Student Succeeds Act (ESSA)) ກຳນົດໃຫ້ພໍ່ແມ່/ຜູ້ປົກຄອງຂອງນັກຮຽນ HIDOE ມີສິດຮູ້ຈັກຄຸນວຸດທິທາງດ້ານອາຊີບຂອງຄູປະຈຳຫ້ອງ ແລະ ໃຫ້ຮູ້ວ່າ ນັກຮຽນໄດ້ຮັບການບໍລິການຈາກອາຈານມືອາຊີບໃນການໃຫ້ການຊ່ວຍເຫຼືອຫຼືບໍ່, ຖ້າໄດ້ຮັບ ຄຸນວຸດທິຂອງພວກເຂົາມີຫຍັງແດ່. ກົດໝາຍຂອງລັດຖະບານກາງອະນຸຍາດໃຫ້ທ່ານຂໍເອົາຂໍ້ມູນສະເພາະກ່ຽວກັບອາຈານປະຈຳຫ້ອງລູກຂອງທ່ານ ແລະ ຄວາມເປັນມືອາຊີບໃນການໃຫ້ຄວາມຊ່ວຍເຫຼືອ ແລະ ຮຽກຮ້ອງໃຫ້ພວກເຮົາໃຫ້ຂໍ້ມູນນີ້ແກ່ທ່ານທັນຕາມເວລາການຂໍ.

ທ່ານມີສິດຂໍຂໍ້ມູນກ່ຽວກັບອາຈານປະຈຳຫ້ອງລູກຂອງທ່ານໄດ້ຕາມຂໍ້ມູນຕໍ່ໄປນີ້.

1. ອາຈານສອນມີຄຸນວຸດທິ ແລະ ມາດຖານການອະນຸຍາດຕາມທີ່ລັດກຳນົດສຳລັບລະດັບເກຣດ ແລະ ວິຊາທີ່ລາວ/ນາງໃຫ້ການສິດສອດບໍ່.

2. ອາຈານສອນກຳລັງສອນພາຍໃຕ້ສະພາບສຸກເສີນ ຫຼື ສະຖານະຊົ່ວຄາວອື່ນໆ ເຊິ່ງຄຸນວຸດທິ ຫຼື ມາດຖານການອະນຸຍາດຂອງລັດຖືກລົບລ້າງໄປແລ້ວບໍ.

3. ອາຈານສອນກຳລັງສອນໃນຂົງເຂດວິຊາທີ່ໄດ້ຮັບການຢັ້ງຢືນການເປັນອາຈານສອນຂອງພວກເຂົາບໍ່.

4. ການຊ່ວຍເຫຼືອຂອງອາຈານສອນໃດໜຶ່ງ ຫຼື ການຊ່ວຍເຫຼືອທີ່ເປັນມືອາຊີບຄ້າຍຄືກັນໃຫ້ບໍລິການກັບລູກຂອງທ່ານບໍ່, ຖ້າມີ, ຄຸນວຸດທິຂອງພວກເຂົາມີຫຍັງແດ່.

ຖ້າທ່ານຢາກໄດ້ຮັບຂໍ້ມູນນີ້, ກະລຸນາຕິດຕໍ່ຫາຫ້ອງການໃນໂຮງຮຽນຂອງພວກເຮົາ.

ມາຮາໂລ (Mahalo),

ອຳນວຍການໂຮງຮຽນ